

# ຫ້າງຫາກະກຽມຕໍ່ໄພພິບັດ :
# ອັກຄີໄພ (ໄຟໄໝ້)


ໃນລະດູຮ້ອນມື້ໜຶ່ງ ...
ວື໊! ວໍ່! ວື໊! ວໍ່!
ຄຶກ!
ແຄັກ!
ອຸ່ຍ!
ຕໍ່ມາບຶດໜຶ່ງ...
ເຮືອຍ!
ຕົ້ນ ນັ່ງຢູ່ໃກ້ໜອງນໍ້າ
ທ່າມກາງວົງລ້ອມຂອງກອງໄຟ
ບວກກັບຄວາມແຮງຂອງລົມ ເຮັດໃຫ້
ໄຟປ່າໄໝ້ລາມໄປສູ່ບ້ານທີ່ໃກ້ຄຽງ ໄວຂຶ້ນ
ປິ໋ດ!
ປິ໋ດ!
ປິ໋ດ!
ໄຟໄໝ້ບໍ?
ໂອ່ຍ!
ຖ້ອບ ແຄັບ!!!!
ມືຂອງຟ້າໄດ້ຖືກໃໝ້
ໃນການຈັບປະຕູຮ້ອນ
ອຸ່ຍຍຍຍຍຍຍ!
ບູມ!


ອ່ອກ! ອ່ອກ!
ຖ້າຂ້ອຍຢູ່ໃກ້ພື້ນດິນ, ຂ້ອຍກໍ່ຈະບໍ່ຫາຍໃຈເອົາຄວັນໄຟຫຼາຍ
ຂ້ອຍເຮັດໄດ້ແລ້ວ!
ຟ້າ! ຂ້ອຍດີໃຈຫຼາຍທີ່ເຈົ້າບໍ່ເປັນຫຍັງ!
ຊ່ວຍແດ່!...
ເວລານັ້ນ, ຟ້າກໍ່ເຫັນເຄື່ອງນຸ່ງຂອງລາວຖືກໄຟໄໝ້!
ຢຸດກ່ອນ, ວາງລົງ ແລະ ກິ້ໄວ້!
ຟ້າ ວາງເຄື່ອງນຸ່ງລົງພື້ນ, ເອົາມືປິດໜ້າຕົວເອງ ແລ້ວມ້ວນໄວ້. ວິທີນີ້ຈະຊ່ວຍກຳຈັດອາກາດ ແລະ ເຮັດໃຫ້ໄຟມອດໄດ້.
ຂອບໃຈ ຕົ້ນ!
ບໍ່ຂອບໃຈຂ້ອຍກໍ່ໄດ້! ໄຟໄໝ້ຄັ້ງນີ້ແມ່ນຄວາມຜິດຂອງຂ້ອຍທັງໝົດ!
ຂ້ອຍໄດ້ບົດຮຽນແລ້ວ. ຂ້ອຍຈະບໍ່ຫຼິ້ນໄຟອີກບາດນີ້!

## ຂ້າງລຸ່ມນີ້ແມ່ນຄຳເຕືອນເພື່ອສຳນຶກກ່ຽວກັບການປະຕິບັດຕໍ່ອັກຄີໄພ. ສຶກສາໃຫ້ດີ! ຈະເຮັດໃຫ້ເຫັນຄວາມແຕກຕ່າງໃດ!

- ຕ້ອງຮັບປະກັນວ່າທຸກຄົນໃນຄອບຄົວຂອງທ່ານຮູ້ວ່າຈະອົບພະຍົບໄປຢູ່ໃສ ແລະ ດ້ວຍວິທີໃດ
- ປະກອບສ່ວນໃນການຝຶກຊ້ອມກ່ຽວກັບອັກຄີໄພຢູ່ບ້ານ, ບ່ອນເຮັດວຽກ ແລະ ໂຮງຮຽນ ຢູ່ສະເໝີ
- ວາງແຜນທາງອອກໄວ້ຫຼາຍທາງ
- ບໍ່ຄວນຖືເບົາ ຕໍ່ໄຟໄໝ້
- ຕ້ອງຮັບປະກັນວ່າອຸປະກອນກ່ຽວກັບປ້ອງກັນໄຟທຸກຊະນິດ ສາມາດເຂົ້າຫາໄດ້ງ່າຍ
- ຖ້າມີຄຳແນະນຳໃຫ້ອົບພະຍົບ, ຕ້ອງອອກໄປຢ່າງທັນທີ
- ຖ້າທ່ານບໍ່ໄດ້ຮັບການຝຶກຊ້ອມໃນການຮັບມືກັບໄຟໄໝ້, ກໍ່ບໍ່ຄວນສ່ຽງຕໍ່ຊີວິດຕົນເອງ
- ເວລາມີໄຟໄໝ້, ກ່ອນຈະເປີດປະຕູ:
    - ຕ້ອງກວດເບິ່ງວ່າມີຄວາມຮ້ອນ ຫຼື ຄວັນ ຢູ່ບໍລິເວນປະຕູ ຖ້າມີ ກໍ່ບໍ່ຄວນເປີດ!
    - ຈັບເບິ່ງປະຕູ ແລະ ກອນປະຕູ, ຖ້າມັນຮ້ອນກໍ່ບໍ່ຄວນເປີດ!
    - ຖ້າປະຕູບໍ່ຮ້ອນ, ໃຫ້ເປີດປະຕູຢ່າງລະມັດລະວັງ ແລະ ໄປຕາມທາງໜີໄຟ
- ຢູ່ໃກ້ພື້ນດິນໄວ້ ເພາະຈະມີຄວັນໄຟໜ້ອຍກວ່າ
- ຖ້າທ່ານຢ້ານ, ກໍ່ບໍ່ຄວນລີ້ ເພາະພະນັກງານມອດໄຟ ຈະຊອກທ່ານບໍ່ເຫັນ!
- ກວດກາເບິ່ງເຄື່ອງເຕືອນໄຟໄໝ້ ເປັນປະຈຳ
- ຖ້າເຄື່ອງນຸ່ງຂອງທ່ານຖືກໄຟໄໝ້ ໃຫ້ ຢຸດ, ວາງລົງພື້ນ, ເອົາມືປິດໜ້າ ແລ້ວ ມ້ວນໄວ້



ຮຽນຮູ້ເພີ່ມເຕີມກ່ຽວກັບໄພພິບັດກະລຸນາເຂົ້າເບິ່ງ:
*www.redcross.org/prepare/disaster/home-fire*


ອົງການກາແດງລາວ ສູນກາງ ຖະໜົນເສດຖາທິລາດ, ຮ່ອມວັດຊຽງຍືນ

ຕູ້ ປ ນ 650

ນະຄອນຫຼວງວຽງຈັນ, ສປປ ລາວ

Tel: +(856 21) 216610, 253014

Fax: +(856 21) 212128, 253014



ເຮັດໃຫ້ເປັນໄປໄດ້ດ້ວຍການສະໜັບສະໜູນຂອງ

ຊ່ວຍເຫຼືອດ້ານມະນຸດສະທຳ ແລະ ປົກປ້ອງພົນລະເຮືອນ

International Federation of Red Cross and Red Crescent Societies

CANADIAN RED CROSS

日本赤十字社 Japanese Red Cross Society

Norwegian **Red Cross**